Visit DTV.gov

# ການປ່ຽນແປງ ສູ່ໂທລະພາບດິຈິຕອລ

## ແມ່ນຫຍັງທີ່ທ່ານຈຳເປັນຕ້ອງຮູ້ກ່ຽວກັບ DTV

## ການປ່ຽນແປງສູ່ດິຈິຕອລ ຂອງ ລັດ ຮາວາຍ




### ການປ່ຽນແປງສູ່ໂທລະພາບດິຈິຕອລ (DTV) ແມ່ນຫຍັງ?

ປະຈຸບັນ, **ມີບາງ**ສະຖານີໂທລະພາບອອກອາກາດ ທີ່ແຜ່ພາບສັນຍານໂທລະພາບ ທັງລະບົບອານາລອກ ແລະ ດິຈິຕອລ. **ໃນຕອນບ່າຍ ຂອງ** ວັນທີ 15 ເດືອນ**ມັງກອນ**, 2009, ສະຖານີໂທລະພາບລະບົບສັນຍານສູງ ຈະແຜ່ພາບແຕ່ໃນລະບົບ ດິຈິຕອລເທົ່ານັ້ນ. ການປ່ຽນແປງສູ່ໂທລະພາບ DTV ຈະມີຜົນສະທ້ອນຕໍ່ຜູ້ຊົມໂທລະພາບລະບົບອອກອາກາດທີ່ບໍ່ເສຍເງິນ (ໂດຍໃຊ້ອັງແຕນຕິດເທິງຫລັງຄາ ຫລື ເອີ້ນວ່າ "ຫູກະຕ່າຍ"). **ສຳລັບພາຍໃນລັດ ຮາວາຍ ສ່ວນຫລາຍ,** ຖ້າທ່ານເອງຍັງເບິ່ງລາຍການທີ່ອອກແຜ່ພາບອອກອາກາດໃນລະບົບອານາລອກ, ທ່ານກໍ່ຕ້ອງເລີ່ມເຮັດດຳເນີນການບາງຢ່າງກ່ອນ ວັນທີ່ 15 ເດືອນ**ມັງກອນ**, 2009. ຜູ້ທີ່ດຳລົງຊີວິດຢູ່ ກົວ ຈະບໍ່ໄດ້ມີການປ່ຽນແປງໄປສູ່ DTV ໃນເວວລານີ້ ແລະ ສຳລັບຜູ້ທີ່ດຳລົງຊີວິດຢູ່ ກາເດິນ ໄອເຊີລ ກໍ່ບໍ່ຈຳເປັນຕ້ອງດຳເນີນການໃດໆທັງໝົດ.

### ເປັນຫຍັງພວກເຮົາຈຶ່ງປ່ຽນມາໃຊ້ ລະບົບດິຈິຕອລ?

ກົດຫມາຍແຫ່ງຊາດມີຂໍ້ບັງຄັບໃຫ້ປ່ຽນ, ເຊິ່ງຈະເປີດສັນຍານ ຄວາມຖີ່ໃຫ້ແກ່ການສື່ສານຂອງວຽກຕຳຫລວດ, ດັບເພີງ, ແລະ ຊ່ວຍເຫລືອສຸກເສີນ, ມັນຊ່ວຍໃຫ້ສະຖານີໂທລະພາບແຜ່ພາບລາຍການດ້ວຍພາບ ແລະ ຄຸນນະພາບ ສູງທີ່ດີກວ່າເກົ່າ ແລະ ທາງເລືອກລາຍການທີ່ຫລາຍຂື້ນ, ແລະ ອານຸຍາດໃຫ້ມີການບໍລິການແບບໄລ້ສາຍທີ່ທັນກ້າວໜ້າສຳລັບຜູ້ບໍລິໂພກ.

### ຂ້ອຍຕ້ອງເຮັດແນວໃດເພື່ອກຽມພ້ອມ?

ທ່ານມີ ສາມ ທາງເລືອກ:

1. **ຕໍ່ໂທລະພາບລະບົບອະນາລອກຂອງທ່ານເຂົ້າກັບກ່ອງປ່ຽນສັນຍານ ດິຈິຕອລ ເປັນ ອະນາລອກ.** ກ່ອງປ່ຽນສັນຍານ ດິຈິຕອລ ເປັນ ອະນາລອກ ມີຂາຍ ແລະ ມີລາຄາ $40-$70 ຈ່າຍພຽງຄັ້ງດຽວ. ເພື່ອຊ່ວຍເຫລືອການຊື້, ລັດທະບານສະຫະຫລັດອາເມຣິກາ ໃຫ້ສອງຄູປອນຫລຸດລາຄາ ມູນຄ່າ $40 ຕໍ່ຫນຶ່ງຄົວເຮືອນ. (ກະລຸນາຮັບຮູ້ວ່າຄູປອນເຫລົ່ານີ້ ຈະໝົດກຳນົດໃຊ້ພາຍໃນ 90 ວັນ ພາຍຫລັງທີ່ໄດ້ສົ່ງທາງໄປສະນີມາໃຫ້ ແລະ ຈະຕ້ອງ**ສະເໜີຂໍພາຍໃນຕົ້ນເດືອນ ທັນວາ 2008 ເພື່ອຮັບປະກັນໃຫ້ນຳສົ່ງໄປຮອດ ກ່ອນກຳນົດການປ່ຽນແປງສູ່ລະບົບ DTV ຂອງລັດ ຮາວາຍ).** ສຳຫລັບຂໍ້ມູນເພີ່ມເຕີມກ່ຽວກັບຄູປອນຫລຸດດລາຄາ, ໃຫ້ເຂົ້າໄປເບິ່ງ www.DTV2009.gov, ຫລື ໂທ 1-888-388-2009 (ຂໍ້ຄວາມສຽງ) ຫລື 1-877-530-2634 ( ໂທລະເລກ). ນອກຈາກນັ້ນ, ທ່ານກໍ່ບໍ່ຈຳເປັນຕ້ອງໃຊ້ອັງແຕນອັນໃຫມ່ ຖ້າທ່ານຮັບສັນຍານຂອງຊ່ອງລາຍການລະບົບອານາລອກ 2-51 ໄດ້ດີແລ້ວດ້ວຍອັງແຕນທີ່ໃຊ້ຢູ່ປະຈຸບັນ. ຫລື

2. **ຊື້ໂທລະພາບດິຈິຕອລ (ໂທລະພາບທີ່ມີລະບົບດູດສັນຍານລະບົບດິຈິຕອລໃນເຄື່ອງ).** ທ່ານ <u>ບໍ່ຈຳເປັນຕ້ອງມີ</u> ໂທລະພາບຄວາມລະອຽດສູງ (HDTV) ເພື່ອຈະໄດ້ຮັບຄວາມບັນເທີງໃນການເບິ່ງສັນຍານໂທລະພາບລະບົບດິຈິຕອລ. ທ່ານພຽງຕ້ອງມີ ໂທລະພາບ <u>ດິຈິຕອລ</u> (ຫລືໂທລະພາບລະບົບອານາລອກ ທີ່ຕໍ່ເຂົ້າ ກ່ອງປ່ຽນສັນຍານ ດິຈິຕອລ ເປັນ ອະນາລອກ). ນອກຈາກນັ້ນ, ທ່ານກໍ່ບໍ່ຈຳເປັນຕ້ອງໃຊ້ອັງແຕນອັນໃຫມ່ ຖ້າທ່ານຮັບສັນຍານຂອງຊ່ອງລາຍການລະບົບອານາລອກ 2-51 ໄດ້ດີແລ້ວດ້ວຍອັງແຕນທີ່ໃຊ້ຢູ່ປະຈຸບັນ ຫລື

3. **ສະມັກເປັນສະມາຊິກ ບໍລິການໂທລະພາບແບບຈ່າຍຄ່າ.** ຖ້າໂທລະພາບຂອງທ່ານຮັບການແຜ່ພາບຂອງສະຖານນີໂທລະພາບທ້ອງຖິ່ນດ້ວຍການບໍລິການໂທລະພາບແບບຈ່າຍຄ່າ ເຊັ່ນ ໂທລະພາບລະບົບສາຍ ຫລື ຈານດາວທຽມ, ການປ່ຽນແປ່ງສູ່ໂທລະພາບດິຈິຕອລ ໄດ້ມີການກະກຽມເປັນທີ່ຮຽບຮ້ອຍແລ້ວ. ບໍລິສັດຈານດາວທຽມ<u>ບໍ່ຈຳເປັນ</u>ຕ້ອງປ່ຽນແປງຊ່ອງໃດໆຂອງພວກເຂົາເປັນລະບົບດິຈິຕອລ. ເຖິງຢ່າງໃດກໍ່ຕາມ, ຖ້າທ່ານມີໂທລະພາບລະບົບອະນາລອກ<u>ທີ່ບໍ່</u>ໄດ້ຮັບການແຜ່ພາບຂອງສະຖານນີໂທລະພາບທ້ອງຖິ່ນດ້ວຍການບໍລິການໂທລະພາບແບບຈ່າຍຄ່າ, ທ່ານຈະຕ້ອງປ່ຽນກ່ອງປ່ຽນສັນຍານດິຈິຕອລ ເປັນອານາລອກ ເພື່ອເບິ່ງການແຜ່ພາບລະບົບດິຈິຕອລຈາກໂທລະພາບ.

### ຂໍ້ມູນເພີ່ມເຕີມ:

1-888-CALL-FCC (ຂໍ້ຄວາມສຽງ) | DTV.gov/Hawaii | 1-888-TELL-FCC (ໂທລະເລກ)

ຢູ່ລັດ ຮາວາຍ ໂທ: **541-2389** ຫລື **541-2390** ຫລື ອີເມລ ໄປທີ່ **HawaiiDTVtransition@fcc.gov**